ASSET

# ການຮວບຮວມ/ສັງລວມ ນະໂຍບາຍ ສະໜັບສະໜູນການຫັນເປັນນິເວດກະສິກຳ ໃນ ສປປ.ລາວ

ໜ່ວຍງານຂະແໜງການຍ່ອຍນິເວດກະສິກຳ, 24 ພະຈິກ 2023


ທ່ານ ສົມສະໄໝ ວົງທິລາດ
ກົມແຜນການ ແລະ ການຮ່ວມມື
ກະຊວງກະສິກຳ ແລະ ປ່າໄມ້

# ສາລະບານ

1. ພາກສະເໜີ
2. ບັນດານະໂຍບາຍຕົ້ນຕໍ ທີ່ສະໜັບສະໜູນນິເວດກະສິກໍາ ໃນ ສປປ ລາວ
3. The ASSET - ຂະບວນການຮຽນຮູ້ ຈາກລຸ່ມຂຶ້ນເທິງ
4. ການສົນທະນານະໂຍບາຍ ກ່ຽວກັບ AE & SFS ພາຍໃຕ້ກອບ LICA
5. ການລິເລີ່ມນະໂຍບາຍທີ່ມີຢູ່ ເຂົ້າໃນການປ່ຽນແປງຈັດຕັ້ງປະຕິບັດນະໂຍບາຍ ໃນ ສປປ.ລາວ
6. ຜົນໄດ້ຮັບຈາກການດໍາເນີນນິເວດກະສິກໍາ
7. ແນວທາງຕໍ່ໜ້າ ໃນ ສປປ.ລາວ

# ພາກສະເໜີ

- ການພັດທະນາ ສປປ.ລາວ ເນັ້ນໃສ່ແລວທາງແບບຍືນຍົງ
- ການລິເລີ່ມ ນິເວດກະສິກຳ ສປປ ລາວ  ຈາກ (PCADR) ໂດຍເລີ່ມແຕ່ 2003 ເຖິງ 2009
- ໃນປັດຈຸບັນນີ້, ປະເທດເຮົາ ກຳລັງຈັດຕັ້ງປະຕິບັດຕາມຍຸດທະສາດເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030
- ສປປ ລາວ ແມ່ນໜຶ່ງໃນຫຼາຍປະເທດ ທີ່ມີສ່ວນຮ່ວມໃນໂຄງການປັບປຸງລະບົບນິເວດກະສິກຳ ແລະ ຄວາມປອດໄພຂອງອາຫານ (ASSET project)

# ນະໂຍບາຍຫຼັກ ທີ່ສະໜັບສະໜູນ AE & SFS ໃນ ສປປ.ລາວ ໃນປັດຈຸບັນ

## ນະໂຍບາຍຫຼັກ ທີ່ສະໜັບສະໜູນ AE ໃນ ສປປ.ລາວ

- ຍຸດທະສາດພັດທະນາກະສິກຳ ເຖິງປີ 2025 ແລະ ວິໄສທັດ 2030
- ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ 5 ປີ ຄັ້ງທີ IX (2021-2025)
- ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ 2030
- ກອບວຽກ ກະສິກຳຍືນຍົງ ແລະ ສີຂຽວ ຮອດປີ 2030
- ກະສິກຳອິນຊີ (OA)
- ການຈັດຕັ້ງປະຕິບັດກະສິກຳທີ່ດີ (GAP)

## ນະໂຍບາຍຫຼັກ ທີ່ສະໜັບສະໜູນ SFS ໃນ ສປປ.ລາວ

1. ແຜນປະຕິບັດງານແຫ່ງຊາດ ກ່ຽວກັບໂພຊະນາການ (NPAN) 2021-2025 (ຮັບຮອງໂດຍຮອງນາຍົກລັດຖະມົນຕີ ໃນວັນທີ 12/10/2021)
2. ເວທີຂໍ້ມູນຂ່າວສານແຫ່ງຊາດ ດ້ານໂພຊະນາການ (NIPN)
3. ການເຜີຍແຜ່ຄຳແນະນຳແບບສະໝັກໃຈ ຂອງ CFS ແລະ ໂພຊະນາການ (ມັງກອນ-ມິຖຸນາ 2023)
4. ແຜນປະຕິບັດງານແຫ່ງຊາດກ່ຽວກັບລະບົບອາຫານແບບຍືນຍົງ (NAP-SFS- ອາດມີການປ່ຽນແປງຊື່) - ກຳລັງພັດທະນາ

# ASSET – ຂະບວນການຮຽນຮູ້ຈາກລຸ່ມຂຶ້ນເທິງ

**ກໍາລັງດໍາເນີນຢູ່ໃນ ສປປ.ລາວ**

1. ທົບທວນບັນດານະໂຍບາຍໃນປັດຈຸບັນ ຈາກຂັ້ນສູນກາງຫາທ້ອງຖິ່ນ
2. ການຄັດເລືອກ ແລະ ເອກະສານຂອງຮູບແບບນະໂຍບາຍນະວັດຕະກໍາ ແລະ ເຄື່ອງມືການຈັດຕັ້ງປະຕິບັດ ຢູ່ຂັ້ນທ້ອງຖິ່ນ
3. ສະໜັບສະໜູນການລິເລີ່ມການປ່ຽນແປງນະໂຍບາຍທີ່ມີຢູ່ແລ້ວ

❖ **ເປົ້າໝາຍຫຼັກ ການກຽມຄວາມພ້ອມການປຶກສາຫາລືດ້ານນະໂຍບາຍ**

- ສະໜັບສະໜູນ/ຊຸກຍູ້ **ນະວັດຕະກໍາ ໃນການຈັດຕັ້ງປະຕິບັດ ກອບວຽກນະໂຍບາຍ**

❖ **ວິທີການຫຼັກ:**

- ກໍານົດເຂົ້າໃນ**ຂະບວນການນະໂຍບາຍ**ທີ່ມີຢູ່ (ລະດັບປະເທດ ແລະ ອາຊຽນ)
- ສ້າງ**ການຫັນເປັນກະສິກໍາທ້ອງຖິ່ນ** ທີ່ມີຢູ່ ແລະ ສະັບສະຫນູນ **ການປ່ຽນແປງ ໂດຍຜ່ານການຄົ້ນຄວ້າ ການປະຕິບັດແບບມີສ່ວນຮ່ວມ**

# ASSET – ຂະບວນການຮຽນຮູ້ຈາກລຸ່ມຂຶ້ນເທິງ

## ການສົນທະນານະໂຍບາຍ ລະດັບຊາດ ແລະ ພາກພື້ນ

- ປະສານງານກ່ຽວກັບກິດຈະກໍາການສົນທະນານະໂຍບາຍລະດັບຊາດໃນ ສປປ ລາວ
- ສ້າງ ແລະ ຊຸກຍູ້ ໜ່ວຍງານຂະແໜງການຍ່ອຍນິເວດກະສິກໍາ (AESSWG)
- ຊີ້ນໍານໍາພາການລິເລີ່ມ LICA’s ໃນອາຊຽນ ແລະ ຮັບປະກັນດ້ານການປະສານງານ ເພື່ອອໍານວຍຄວາມສະດວກ ການປຶກສານະໂຍບາຍ ພາຍໃນປະເທດອື່ນໆຂອງ ASSET (ກໍາປູເຈບ ແລະ ສສ.ຫວຽດນາມ).
- ຊຸກຍູ້ການປຶກສາຫາລືດ້ານນະໂຍບາຍໃນລະດັບພາກພື້ນ (ASEAN) ພ້ອມກັນກັບ FAO and UN-ESCAP ແລະ ການນໍາເອົາບົດຮຽນ ແລະ ປະສົບການ ຈາກບັນດາປະເທດຕ່າງໆ ມານໍາໃຊ້ໃນ ສປປ ລາວ

# ການປຶກສາຫາລືດ້ານນະໂຍບາຍ ກ່ຽວກັບ AE & SFS ພາຍໃຕ້ LICA



# 3. ບາງຂໍ້ລິເລີ່ມນະໂຍບາຍທີ່ມີ ທີ່ໄດ້ຈັດຕັ້ງປະຕິບັດແລ້ວ ໃນ ສປປ.ລາວ

| ການລິເລີ່ມ | ສະຖານທີ່ ພາຍໃນປະເທດ |
|---|---|
| ການຄຸ້ມຄອງການນຳໃຊ້ຢາປາບສັດຕູພືດ ໃນຂັ້ນເມືອງ | ເມືອງທ່າໂທມ, ແຂວງໄຊສົມບູນ.<br>ເມືອງຄຳ, ແຂວງຊຽງຂວາງ |
| 5 ວິທີທາງ ເພື່ອຊຸກຍູ້ນະວັດຕະກຳ ໃນລະບົບການຜະລິດພືດຜັກອິນຊີ | ບ້ານທົ່ງມັງ ແລະ ບ້ານໂນນແຕ້, ນະຄອນຫຼວງວຽງຈັນ |
| ກອງທຶນກະສິກຳແບບອະນຸລັກ | ແຂວງໄຊຍະບູລີ |
| ສະໜັບສະໜູນ ການເພີ່ມມູນຄ່າ ໄມ້ໄຜ່ | ແຂວງຫົວພັນ |
| ການທົດລອງລະບົບການຮັບປະກັນແບບມີສ່ວນຮ່ວມ | ແຂວງຊຽງຂວາງ |
| ວິທີການຂະຫຍາຍການເຕີບໂຕ ສີຂຽວ | ແຂວງພາກເໜືອ |
| ຄວາມຍືນຍົງຂອງການປູກກ້ວຍເປັນສິນຄ້າ ໃນ ສປປ. ລາວ | ແຂວງ ຫຼວງນ້ຳທາ, ອຸດົມໄຊ, ຜົ້ງສາລີ, ສາລະວັນ ແລະ ບໍລິຄຳໄຊ |
| ການມີສ່ວນຮ່ວມພາກລັດແລະເອກະຊົນ ເພື່ອພັດທະນາຄຸນນະພາບການປຸງແຕ່ງ | ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ຊຽງຂວາງ, ໄຊຍະບູລີ, ຫຼວງພະບາງ ແລະ ອຸດົມໄຊ |

# ຜົນໄດ້ຮັບ ຈາກການສັງລວມນະໂຍບາຍ ທີ່ສະໜັບສະໜູນນິເວດກະສິກຳ ແລະ ການຫັນປ່ຽນລະບົບອາຫານທີ່ປອດໄພ ໃນ ສປປ.ລາວ

## ການວິເຄາະ:

- ບັນດານະໂຍບາຍສະໜັບສະໜູນ ນິເວດກະສິກຳ ແລະ ລະບົບອາຫານທີ່ປອດໄພ ແມ່ນເພື່ອຫັນປ່ຽນລະບົບສະບຽງອາຫານ ໃຫ້ມີຄວາມຍືນຍົງຫຼາຍຂຶ້ນ;
- ບໍ່ມີເອກະສານໃດສະເພາະ ທີ່ສະໜັບສະໜູນ ທັງໝົດ 10 ອົງປະກອບຂອງ AE ແລະ ເປົ້າໝາຍຫຼັກຂອງ SFS.
- ນະໂຍບາຍທີ່ສະໜັບສະໜູນ AE ແລະ SFS ແມ່ນບໍ່ໄດ້ຖືກເຜີຍແຜ່ທັງໝົດຢູ່ໃນຂັ້ນທ້ອງຖິ່ນ
- ຍັງຂາດແຮງຈູງໃຈໃນການສົ່ງເສີມ, ພັດທະນາ ແລະ ສ້າງຄວາມເຂັ້ມແຂງ ດ້ານນິເວດກະສິກຳ ແລະ ລະບົບອາຫານທີ່ປອດໄພ
- ຍັງຂາດຄວາມຮັບຜິດຊອບຂອງຄູ່ຮ່ວມມື ໃນການເຂົ້າເຖິງ ແລະ ປະເມີນ ການຈັດຕັ້ງປະຕິບັດບັນດານະໂຍບາຍ ທີ່ສະໜັບສະໜູນ AE & SFS.

## ຂອບເຂດການປັບປຸງ ສຳລັບ AE & SFS ໃນ ສປປ.ລາວ

- ບັນດານະໂຍບາຍໃນຕໍ່ໜ້າ ຄວນຈະກຳນົດສະເພາະ ການສະໜັບສະໜູນນິເວດກະສິກຳ ແລະ ລະບົບອາຫານທີ່ປອດໄພ ສຳລັບການເຜີຍແຜ່ ແລະ ການຈັດຕັ້ງປະຕິບັດ ທີ່ດີຂຶ້ນກວ່າເກົ່າ;
- ບັນດານະໂຍບາຍສະໜັບສະໜູນນິເວດກະສິກຳ ແລະ ລະບົບອາຫານທີ່ປອດໄພ ໃນ ສປປ.ລາວ ຄວນຈະໄດ້ຮັບການເຜີບແຜ່ ຈາກຂັ້ນສູນກາງຮອດທ້ອງຖິ່ນ, ເພື່ອເພີ່ມທະວີການເຂົ້າເຖິງຂໍ້ມູນຂ່າວສານຂອງບັນດາພາກສ່ວນກ່ຽວຂ້ອງ ກ່ຽວກັບນະໂຍບາຍລັດຖະບານ;
- ການສົ່ງເສີມ ແລະ ສະໜັບສະໜູນ ດ້ານນິເວດກະສິກຳ ແລະ ລະບົບອາຫານທີ່ປອດໄພ ຄວນຈະຈະແຈ້ງ ໃນການປັບປຸງບັນດາ ຍຸດທະສາດ ແລະ ນິຕິກຳ.

# ຜົນໄດ້ຮັບ ຈາກການສັງລວມນະໂຍບາຍ ທີ່ສະໜັບສະໜູນນິເວດກະສິກຳ ແລະ ການຫັນປ່ຽນລະບົບອາຫານທີ່ປອດໄພ ໃນ ສປປ.ລາວ

**ສິ່ງທ້າທາຍ ຂອງນະໂຍບາຍສະໜັບສະໜູນນິເວດກະສິກຳ ໃນ ສປປ.ລາວ**

- ບັນດາ ຍຸດທະສາດ, ນະໂຍບາຍ, ແຜນງານ ຂອງຫຼາຍຂະແໜງການ ສ່ວນໃຫຍ່ແລ້ວແມ່ນເຜີຍແຜ່ມາຈາກມະຕິກອງປະຊຸມພັກ, ທິດທາງນະໂຍບາຍ ແລະ ແຜນງານບຸລິມະສິດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 2021-2025, ສະນັ້ນ, ນະໂຍບາຍ ທີ່ສະໜັບສະໜູນນິເວດກະສິກຳ ແລະ ລະບົບອາຫານທີ່ປອດໄພ ແມ່ນເປັນແນວທາງທີ່ສົມບູນ;
- ການເຜີຍແຜ່ນະໂຍບາຍລັດຖະບານ ທີ່ເປັນມິດຕໍ່ສິ່ງແວດລ້ອມ ແມ່ນມີຂໍ້ຈຳກັດ ໃນຂັ້ນທ້ອງຖິ່ນ (ແຂວງ) ແລະ ສ່ວນໃຫຍ່ເປັນທິດສະດີ, ໂດຍສະເພາະການເຜີຍແຜ່ໃນເຂດຊົນນະບົດ;
- ບາງນະໂຍບາຍ ບໍ່ໄດ້ສະໜັບສະໜູນທັງໝົດ 10 ອົງປະກອບຂອງນິເວດກະສິກຳ;
- ຍັງຄົງຂາດແຮງຈູງໃຈ ທີ່ຈະ ສົ່ງເສີມ, ພັດທະນາ ແລະ ຂະຫຍາຍການຫັນເປັນນິເວດກະສິກຳ ສຳລັບລະບົບອາຫານທີ່ປອດໄພ;
- ຍັງຂາດຄວາມຮັບຜິດຊອບຂອງຄູ່ຮ່ວມມື ສຳລັບການປະເມີນການຈັດຕັ້ງປະຕິບັດນະໂຍບາຍລັດຖະບານ.

# ຜົນໄດ້ຮັບ ຈາກການສັງລວມນະໂຍບາຍ ທີ່ສະໜັບສະໜູນນິເວດກະສິກໍາ ແລະ ການຫັນປ່ຽນລະບົບອາຫານທີ່ປອດໄພ ໃນ ສປປ.ລາວ

## ຄໍາແນະນໍາ/ຂໍ້ສະເໜີ

- ບັນດາຍຸດທະສາດນະໂຍບາຍລັດຖະບານ, ແຜນພັດທະນາ, ນະໂຍບາຍ, ນິຕິກໍາ ແລະ ຂໍ້ບັງຄັບ ທີ່ວາງອອກ ຫຼື ປັບປຸງໃນຕໍ່ໜ້າ ຄວນຈະມີຫົວຂໍ້ສະເພາະ ທີ່ຕິດພັນກັບການສະໜັບສະໜູນນິເວດກະສິກໍາ ແລະ ລະບົບອາຫານທີ່ປອດໄພ ເພື່ອເປັນບ່ອນອີງໃນການເຜີຍແຜ່ ແລະ ຈັດຕັ້ງປະຕິບັດ;
- ນິເວດກະສິກໍາ ແລະ ລະບົບອາຫານທີ່ປອດໄພ ໃນ ສປປ.ລາວ ຄວນຈະເຜີຍແຜ່ ຈາກຂັ້ນສູນກາງລົງສູ່ທ້ອງຖິ່ນ, ໂດຍສະເພາະຜ່ານການພັດທະນາເຄື່ອງມືການໂຄສະນາ ເພື່ອເພີ່ມທະວີການເຂົ້າເຖິງຂໍ້ມູນຂ່າວສານ;
- ການສົ່ງເສີມ ແລະ ສະໜັບສະໜູນ ນິເວດກະສິກໍາ ແລະ ລະບົບອາຫານທີ່ປອດໄພ ຄວນຈະແຈ້ງ ເມື່ອມີການປັບປຸງບັນດາຍຸດທະສາດ ແລະ ນິຕິກໍາ;
- ຜົນໄດ້ຮັບຂອງໂຄງການ ASSET ຄວນໄດ້ຮັບການສະຫຼຸບ ແລະ ລາຍງານ ເພື່ອປະກອບເຂົ້າໃນການສະໜັບສະໜູນນະໂຍບາຍ AE & SFS;
- ຄໍາແນະນໍາ/ຂໍ້ສະເໜີ ສໍາລັບການຫັນປ່ຽນນິເວດກະສິກໍາ ແລະ ລະບົບອາຫານທີ່ປອດໄພ ໃນ ສປປ.ລາວ ຄວນຈະນໍາສະເໜີ ໃນລະດັບນະໂຍບາຍແຫ່ງຊາດ ເຊິ່ງໄດ້ມີການປຶກສາຫາລື ດ້ານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ບັນດາຂະແໜງການອື່ນໆ;
- ການສ້າງຕັ້ງຄະນະຮັບຜິດຊອບ ການຫັນປ່ຽນນິເວດກະສິກໍາ ແລະ ການຫັນປ່ຽນລະບົບອາຫານທີ່ປອດໄພ ສາມາດສະເໜີເຂົ້າໃນໜ່ວຍງານຂະແໜງການກະສິກໍາ ແລະ ພັດທະນາຊົນນະບົດ (SWG-ARD) ຂອງກະຊວງ ກປ.

# ແນວທາງຕໍ່ໜ້າ ເພື່ອການພັດທະນານິເວດກະສິກຳໃນອະນາຄົດ

- ນະໂຍບາຍຄັດຫຍໍ້ ດ້ານນິເວດກະສິກຳ
- ການສ້າງຄວາມເຂັ້ມແຂງນິເວດກະສິກຳ ໃນລະດັບຊາດ ໂດຍຜ່ານ SSWG-AE
- ໃນລະດັບອາຊຽນ: ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດນິເວດກະສິກຳ
- ແນວທາງ ສຳລັບການຫັນປ່ຽນນິເວດກະສິກຳ ແລະ ການຫັນປ່ຽນ SFS ໃນ ສປປ. ລາວ





# ຂອບໃຈ